Australian Government
Department of Home Affairs

# ບໍລິການແປພາສາບໍ່ເສຍຄ່າ

## ການປ່ຽນແປງການບໍລິການເນື່ອງຈາກໂຄວິດ-19 (COVID-19)

ການນໍາໃຊ້ບໍລິການແປພາສາທີ່ມີຄຸນນະພາບແມ່ນມີຄວາມສໍາຄັນຕໍ່ຜູ້ທີ່ມີຄວາມສາມາດດ້ານພາສາອັງກິດຕໍ່າ ຫຼື ບໍ່ມີເລີຍໃນລະຫວ່າງສະຖານະການ ໂຄວິດ-19.

ຜູ້ຄົນຄວນຈະໃຊ້ບໍລິການແປພາສາທີ່ພວກເຂົາມີ.

ຮຽນຮູ້ກ່ຽວກັບ **ໂຄວິດ-19 ແລະ ອາການຂອງມັນ (COVID-19 and its symptoms)**

## ບໍລິການແປພາສາບໍ່ເສຍຄ່າແມ່ນຫຍັງ?

ບໍລິການແປພາສາບໍ່ເສຍຄ່າແມ່ນມີໃຫ້ທ່ານ, ຖ້າຫາກທ່ານ:

- ຢູ່ໃນອົດສະຕຣາລີ
- ມີບັດ Medicare ແລະ
- ມີທັກສະທາງດ້ານພາສາອັງກິດທີ່ຕໍ່າ

## ຂ້ອຍຈະເຂົ້າເຖິງບໍລິການແປພາສາບໍ່ເສຍຄ່າໄດ້ແນວໃດ?

ຜູ້ໃຫ້ບໍລິການດັ່ງຕໍ່ໄປນີ້ສາມາດເຂົ້າເຖິງການບໍລິການແປພາສາບໍ່ເສຍຄ່າໃນນາມຂອງທ່ານ:

- ຜູ້ປະຕິບັດງານການແພດເອກະຊົນ
- ເພສັດຊະກອນ
- ອົງການທີ່ບໍ່ສັງກັດລັດຖະບານ
- ນາຍໜ້າອະສັງຫາລິມະຊັບ
- ອໍານາດການປົກຄອງທ້ອງຖິ່ນເຊັ່ນ: ສະພາທ້ອງຖິ່ນ
- ສະຫະພັນການຄ້າ ແລະ
- ສະມາຊິກສະພາ.

ສໍາລັບຂໍ້ມູນເພີ່ມເຕີມໃນບໍລິການເຫຼົ່ານີ້ ໃຫ້ເບິ່ງ **ທີ່ນີ້ (here)**.

ຜູ້ໃຫ້ບໍລິການຂ້າງເທິງສາມາດເຊື່ອມຕໍ່ກັບຜູ້ແປພາສາທາງໂທລະສັບພາຍໃນສອງສາມນາທີເພື່ອໃຫ້ແນ່ໃຈວ່າທ່ານໄດ້ຮັບຂໍ້ມູນ ແລະ ຄໍາແນະນໍາເປັນພາສາຂອງທ່ານ.

## ແປພາສາ

ອົງການຮັບຮອງຄຸນນະພາບສໍາລັບຜູ້ແປພາສາ ແລະ ລ່າມແປພາສາແຫ່ງຊາດ (NAATI) ໄດ້ໃຊ້ຜູ້ແປພາສາທີ່ຖືກຮັບຮອງ. ຜູ້ແປພາສາແມ່ນຖືກຜູກມັດດ້ວຍຫຼັກຈັນຍາບັນດ້ານວິຊາຊີບທີ່ຮຽກຮ້ອງໃຫ້ພວກເຂົາ:

- ແປຂໍ້ມູນຢ່າງຖືກຕ້ອງ ແລະ ຊື່ກົງ
- ຮັກສາຄວາມລັບ
- ເປັນກາງ ແລະ ບໍ່ລໍາອຽງ ແລະ
- ປະພຶດຕົວຢ່າງເປັນມືອາຊີບຕະຫຼອດເວລາ.

ນະໂຍບາຍບໍລິການການແປພາສາບໍ່ເສຍຄ່າແມ່ນການນໍາໃຊ້ຜູ້ແປພາສາທີ່ມີຄວາມໜ້າເຊື່ອຖືສູງສຸດທີ່ມີ. ການຂໍໃຫ້ມີຜູ້ແປພາສາສະເພາະບໍ່ໄດ້ຖືກຊຸກຍູ້ສໍາລັບເຫດຜົນນີ້.

## FIS ໃຫ້ບໍລິການຫຍັງ?

- ການແປພາສາທາງໂທລະສັບທັນທີ. ບໍລິການນີ້ແມ່ນເປັນປະໂຫຍດສູງສຸດຕໍ່ກັບການແປທີ່ບໍ່ໄດ້ວາງແຜນລ່ວງໜ້າ ແລະ ໃຫ້:
  - ເຂົ້າເຖິງຜູ້ແປພາສາຫຼາຍກວ່າ 3,000 ຄົນໃນຫຼາຍກວ່າ 160 ພາສາ
  - ການບໍລິການແປພາສາ 24 ຊົ່ວໂມງຕໍ່ວັນ, 7 ວັນຕໍ່ອາທິດ.
  - ການເຊື່ອມຕໍ່ກັບຜູ້ແປພາສາພາຍໃນສອງສາມນາທີຂອງການໂທລະສັບ.
- ການຈອງການແປພາສາທາງໂທລະສັບລ່ວງໜ້າ.
  - ມັນມີປະໂຫຍດສໍາລັບການແປທີ່ບໍ່ໄດ້ວາງແຜນມາກ່ອນ ຫຼື ຖ້າຫາກທ່ານຕ້ອງການພາສາທີ່ໃຊ້ກັນໜ້ອຍ.